# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດ ທີ 8 ເມສາ 2018 (4-8-2018)

## ຜູ້ລ້ຽງຂອງພວກເຮົາ

*ດົນປານໃດແລ້ວ ທີ່ຜູ້ນຳທ່ຽວເຮັດໃຫ້ປະສົບການມີຄວາມຊົງຈຳຫຼາຍຂຶ້ນ?*

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້ານຳພາພວກເຮົາໃນຂນະດຽວກັນພຣະອົງເດີນກັບພວກເຮົາ.

### ພຣະຄັມພີຕອບສນອງຕໍ່ຊີວິດ

ແຜນທີ່ເປັນສິ່ງສຳຄັນໃນການຊີ້ທາງໃຫ້ທ່ານຈາກສະຖານທີ່ນຶ່ງໄປອີກແຫ່ງນຶ່ງ, ແຕ່ວ່າທ່ານຕ້ອງໄດ້ຮໍ່າຮຽນມັນກ່ອນໆຈະອອກເດີນທາງ. ຖ້າວ່າທ່ານບໍ່ຮູ້ທົບທາງນັ້ນດີ, ທ່ານຈະຕ້ອງໄດ້ຢຸດເປັນລະຍະແລະກວດກາເບິ່ງແຜນທີ່ນັ້ນເລື້ອຍໆ.

ຈີພີແອັສ ກໍດີກວ່າ, ແຕ່ວ່າທ່ານຍັງຈະຕ້ອງໄດ້ຕັ້ງໃຈເບິ່ງ. ທ່ານຕ້ອງແນມເບິ່ງໜ້າຈໍຢ່າງສືບຕໍ່ເນື່ອງເພື່ອໃຫ້ເຫັນວ່າຍັງໄກປານໃດຈຶ່ງຈະເຖິງບ່ອນລ້ຽວທີ່ຈະມາເຖິງຫລືຟັງສຽງຢ່າງຈົດຈໍ່ຕໍ່ຄຳແນະນຳຕ່າງໆ.

ການເດີນທາງທີ່ດີທີ່ສຸດນັ້ນກໍຄືການໄປກັບຄົນທີ່ຮູ້ຈັກທາງນັ້ນດີ. ຜູ້ນຳທ່ຽວສາມາດເຮັດໃຫ້ທ່ານຮ່ວມມືແລະເຕືອນທ່ານໃຫ້ "ເຂົ້າຈັບເລນຊ້າຍ" ຫຼື "ຕຽມພ້ອມລ້ຽວຈັ້ງໆ." ພວກເຂົາຮູ້ທາງລັດສ່ວນຫຼາຍທີ່ຈີພີແອັສບໍ່ສລາດພໍທີ່ຈະຮູ້ຈັກໄດ້. ຜູ້ນຳທ່ຽວຍັງສາມາດແບ່ງປັນ "ຄຳເຫັນທີ່ມີສີສັນ" ໄດ້ອີກດ້ວຍໃນຂນະທີ່ທ່ານເດີນທາງ, ການບອກເຣື່ອງຕ່າງໆທີ່ໜ້າສົນໃຈເລັກໆນ້ອຍໆກ່ຽວກັບສະຖານທີ່ຕາມເສັ້ນທາງນັ້ນ.

ໃຫ້ພວກເຮົາຍອມຮັບວ່າ, ພວກເຮົາທຸກຄົນຕ້ອງການຜູ້ນຳທາງໃຫ້ຜ່ານຜ່າຊີວິດ. ເຖິງແມ່ນວ່າເມື່ອພວກເຮົາຄິດອອກໄວ້ແລ້ວກໍຕາມ, ສິ່ງກີດຂວາງແລະການເດີນທາງຖືກປ່ຽນກໍແຊກຊ້ອນເຂົ້າຊີວິດ. ແຕ່ວ່າພຣະເຈົ້າກະທຳຕໍ່ພວກເຮົາເໝືອນດັ່ງຜູ້ລ້ຽງແກະໄດ້ກະທຳຕໍ່ຝູງແກະຂອງຕົນ. ພຣະເຈົ້າເປັນຜູ້ລ້ຽງແກະທີ່ດີ ທີ່ຊົງນຳພາພວກເຮົາໃຫ້ໄປໃນທາງທີ່ຖືກຕ້ອງແລະໃນທິດທາງທີ່ຖືກ.

**ພຣະຄັມພີກ່າວວ່າຢ່າງໃດ?** (ຈົ່ງເບິ່ງຕາມຂໍ້ 1, 2, 3 )

### ສຶກສາພຣະຄັມພີ

**1. <u>ເພງສັຣເສີນ 23:1-3</u>**

*1 ພຣະຜູ້ເປັນເຈົ້າຊົງເປັນຜູ້ລ້ຽງຂ້າພຣະອົງ ຂ້າພຣະອົງມີທຸກສິ່ງທີ່ຂ້າພຣະອົງຕ້ອງການ. 2. ພຣະອົງຊົງພາຂ້າພຣະອົງໃຫ້ພັກເຊົາຢູ່ໃນປ່າຫຍ້າອັນຂຽວສົດ ພຣະອົງຊົງພາຂ້າພຣະອົງໄປໃນບ່ອນທີ່ມີບໍ່ນ້ຳອັນສົດໃສ ແລະງຽບສງັດ. 3. ພຣະອົງຊົງໃຫ້ຂ້າພຣະອົງມີແຮງຂຶ້ນໃໝ່ແລະຊົງນຳພາຂ້າພຣະອົງໄປໃນທາງແຫ່ງຄວາມຊອບທັມ ເພື່ອເຫັນແກ່ພຣະນາມຂອງພຣະອົງ.*

ດາວິດຊຶ່ງເປັນກະສັດແຫ່ງອິສຣາເອນຄົງໄດ້ຂຽນພຣະທັມເພງສັຣເສີນບົດທີ່ 23 ຫຼັງຈາກໄດ້ຂຶ້ນຄອງຣາດ. ຊຶ່ງຊີ້ບອກຢ່າງກະຈ່າງແຈ້ງເຖິງປະສົບການສ່ວນຕົວ. ຊຶ່ງເປັນພະຍານເຖິງຄວາມເຊື່ອທີ່ຖືກທົດລອງໂດຍການທົດລອງຕ່າງໆທີ່ເຮັດໃຫ້ຊີວິດສຸຂຸມແລະກາຍເປັນຜູ້ໃຫຍ່ໂດຍປີການທີ່ຜ່ານພົ້ນໄປ.

ດາວິດມີປະສົບການກັບການຂັດແຍ້ງ ທັງພາຍໃນແລະພາຍນອກ ຊຶ່ງລວມທັງສົງຄາມ, ຄອບຄົວຖືກແບ່ງແຍກ, ຄວາມຜິດຫວັງສ່ວນຕົວ, ຄວາມທໍ້ຖອຍໃຈ, ແລະຄວາມໝົດຫວັງ. ມືຂອງເພິ່ນກໍໄດ້ເປື້ອນເລືອດໂດຍການຂ້າອູຣີຢາ. ການຫຼິ້ນຊູ້ສູ່ຜົວເມັຍກັບເບັດຊີບາຂອງເພິ່ນເປັນເໝືອນກະນວນໄຟໃຫ້ຄອບຄົວມີການຕໍ່ສູ້ກັນທີ່ນໍາໄປເຖິງການຂັດແຍ້ງກັນລະຫວ່າງສະມາຊິກໃນຄອບຄົວ. ດາວິດໄດ້ມີປະສົບການກັບຄວາມບາບແລະຄວາມເສັຽໃຈຢ່າງໜັກຕໍ່ຜົນກັມເຫຼົ່ານັ້ນ; ເພິ່ນໄດ້ຮູ້ຈັກເຖິງຄວາມເຈັບປວດຂອງການຕາຍຂອງລູກຊາຍຜູ້ນຶ່ງ ແລະອີກຜູ້ນຶ່ງທີ່ໄດ້ກະບົດເພື່ອຍາດຊີງເອົາບັນລັງຂອງເພິ່ນ.

ເຖິງປານນັ້ນບົດເພງສັຣເສີນຂອງເພິ່ນກໍຢັ້ງຢືນໄດ້ວ່າ, ໂດຍຜ່ານສິ່ງທັງປວງນີ້ ດາວິດຮູ້ວ່າພຣະເຈົ້າປຽບເໝືອນຜູ້ລ້ຽງແກະທີ່ຮັກເພິ່ນຢູ່ສເມີ. ພາບພົດໃນບົດເພງສັຣເສີນຂອງເພິ່ນອາດຍ້ອນຄືນໄປເຖິງປະສົບການຕອນທ່ານຍັງເປັນເດັກນ້ອຍຢູ່. ໃນຖານະທີ່ເປັນເດັກລ້ຽງແກະ ດາວິດຄິດວ່າຄົງຈະບໍ່ເປັນຄົນທີ່ຖືກເລືອກໃຫ້ເປັນກະສັດຂອງອິສຣາເອນ. ພິເສດຫຼາຍທີ່ດາວິດ, ນັກຕໍ່ສູ້ທີ່ຍິ່ງໃຫຍ່, ໄດ້ຖືກນໍາພາແບບທັມມະດາ ແຕ່ວ່າການຮັບປະກັນຊີ້ໃຫ້ເຫັນພາບພົດຂອງພຣະເຈົ້າ ໃນຖານະທີ່ເປັນຜູ້ລ້ຽງທີ່ອ່ອນໂຍນໃນການເບິ່ງແຍງຮັກສາຄວາມຕ້ອງການຂອງຝູງແກະຂອງເພິ່ນ.

ຜົນກະທົບອັນເລິກເຊິ່ງຂອງພຣະທັມເພງສັຣເສີນບົດທີ 23 ບໍ່ໄດ້ກ່າວເຖິງວ່າພຣະເຈົ້າເປັນຫ່ວງໃຍຄືກັບຜູ້ລ້ຽງແກະ, ແຕ່ວ່າຄວາມໃກ້ຊິດຂອງຄວາມຈິງນັ້ນຄືພຣະເຈົ້າເປັນຜູ້ລ້ຽງຂອງຂ້າພຣະອົງ. ພຣະອົງຊົງເປັນຜູ້ລ້ຽງຜູ້ຊຶ່ງ "ຊົງພາຂ້າພຣະອົງໃຫ້ພັກເຊົາຢູ່ໃນປ່າຫຍ້າອັນຂຽວສົດ"; ຜູ້ຊຶ່ງ "ຊົງພາຂ້າພຣະອົງໄປໃນບ່ອນທີ່ມີບໍ່ນໍ້າອັນສົດໃສ ແລະງຽບສງັດ." ດາວິດຮູ້ວ່າເພິ່ນເປັນຂອງອົງພຣະຜູ້ເປັນເຈົ້າແລະທີ່ປະທານຄວາມຮັບປະກັນທີ່ສງົບສຸກໃນຖ້າມກາງການທົດລອງ, ບັນຫາຕ່າງໆ.

ໃນທາງໃດທີ່ທ່ານໄດ້ປະສົບການກັບການຊົງນໍາຈາກພຣະເຈົ້າໃນຊີວິດ?

ການສະແດງອອກຂອງດາວິດຕໍ່ຄວາມເຊື່ອໄວ້ວາງໃຈຢ່າງແທ້ຈິງໄດ້ກ່າວຢ່າງງ່າຍໆວ່າ "ຂ້າພຣະອົງມີທຸກສິ່ງທີ່ຂ້າພຣະອົງຕ້ອງການ." ເພິ່ນໄດ້ກ່າວເຖິງທົ່ງຫຍ້າທີ່ຂຽວສົດ, ແລະແມ່ນໍ້າທີ່ງຽບສງັດກ່ອນເພາະວ່ານັ້ນແມ່ນຄວາມຕ້ອງການພື້ນຖານຂອງຝູງແກະຖ້າຫາກວ່າຢາກຈະຢູ່ລອດແລະໃຫຍ່ຂຶ້ນ. ຝູງແກະບໍ່ສາມາດຕິດຕາມຜູ້ລ້ຽງໄດ້ຖ້າບໍ່ມີການພັກຜ່ອນແລະມີອາຫານພຽງພໍ. ຜູ້ລ້ຽງແກະຕ້ອງເອົາຕົວເອງເຂົ້າສ່ຽງແລະສ່ວນຫຼາຍຕ້ອງໄດ້ເດີນທາງແສນໄກ ເພື່ອໃຫ້ພົບກັບຄວາມຕ້ອງການພື້ນຖານເຫຼົ່ານີ້, ແຕ່ວ່າເພິ່ນຈໍາເປັນຕ້ອງໄດ້ເຮັດເພາະວ່າເພິ່ນຫ່ວງໃຍແລະຕັ້ງໃຈໃສ່ຝູງແກະ. ລະດັບຄວາມພໍໃຈຂອງພວກເຮົາແມ່ນພົວພັນໂດຍຕົງຕໍ່ການໃກ້ຊິດຕໍ່ຜູ້ລ້ຽງທີ່ດີຂອງພວກເຮົາ.

ປໂຍກທີ່ວ່າ "ພຣະອົງຊົງໃຫ້ຂ້າພຣະອົງມີແຮງຂຶ້ນໃໝ່" ສາມາດເຫັນທັງສອງແນວຄິດ. ການເລີ້ມຕົ້ນໃໝ່ສາມາດເລັງເຖິງແກະທີ່ກໍາລັງຫຼົງຫາຍທີ່ໄດ້ນໍາກັບຄືນມາສູ່ຄອກ; ຊຶ່ງອາດຈະຊີ້ໃຫ້ເຫັນເຖິງຄວາມເລິກຂອງການເລີ້ມຕົ້ນໃໝ່ຂອງຝູງແກະທີ່ຍັງຢູ່ໃນສາຍສັມພັນກັບຜູ້ລ້ຽງເຊັ່ນກັນ. ພາບທັງສອງນີ້ກ່ຽວພັນກັນ. ພຣະເຈົ້າມີພຣະປະສົງອັນລົ້ນເຫຼືອສໍາລັບລູກແກະທັງປວງຂອງພຣະອົງ, ແມ້ກະທັ້ງຕົວທີ່ຫຼົງເສັຽໄປ.

"ພຣະອົງຊົງພາຂ້າພຣະອົງໄປໃນທາງທີ່ຖືກຕ້ອງ." ມີຄວາມໝາຍງ່າຍໆວ່າພວກເຮົາຈະປອດພັຍແລະຖືກຄຸ້ມຄອງຮັກສາເພາະວ່າຜູ້ລ້ຽງກໍຢູ່ທີ່ນັ້ນ. ນີ້ກໍບໍ່ໄດ້ໝາຍຄວາມວ່າພວກເຮົາຈະບໍ່ພົບພັຍອັນຕະລາຍແລະຄວາມຫຍຸ້ງຍາກຂະນະທີ່ພວກເຮົາຕິດຕາມຜູ້ລ້ຽງ. ຂໍ້ທີ 4 ເຕືອນພວກເຮົາວ່າແກະອາດຈະເດີນຜ່ານຮ່ອມພູທີ່ມືດ, ປານນັ້ນພວກເຂົາສາມາດມີຄວາມກ້າຫານໃນການຮູ້ຈັກວ່າພວກເຂົາຈະບໍ່ຢ້ານກົວຕໍ່ອັນຕະລາຍຕາບໃດທີ່ພວກເຂົາຍັງຢູ່ໃກ້ກັບຜູ້ລ້ຽງ.

ປໂຍກສຸດທ້າຍຂອງຂໍ້ 3 "ເພື່ອເຫັນແກ່ພຣະນາມຂອງພຣະອົງ" ໃຊ້ເປັນເໝືອນທ່ອນແຍກຂອງບົດເພງ. ຜູ້ລ້ຽງທີ່ດີກໍຈະບໍ່ນໍາພາລູກແກະພຣະອົງໄປໃນທາງທີ່ເປັນອັນຕະລາຍຫຼືພິນາດຈິບຫາຍ ເພາະວ່າມັນເປັນການກົງກັນຂ້າມກັບຄຸນສົມບັດຂອງພຣະອົງ. ພຣະເຈົ້າປະທານການນໍາພາທີ່ພວກເຮົາຕ້ອງການ "ເພື່ອເຫັນແກ່ພຣະນາມຂອງພຣະອົງ."

ດົນປານໃດແລ້ວທີ່ທ່ານໄດ້ປະສົບການກັບການຊົງສະຖິດຢູ່ດ້ວຍຂອງພຣະເຈົ້າໃນຮ່ອມພູອັນມືດດໍາ ?

## 2. <u>ເພງສັຣເສີນ 23:4-5</u>

*4 ຂ້າແດ່ພຣະຜູ້ເປັນເຈົ້າ ເຖິງແມ່ນວ່າທາງຈະຜ່ານຄວາມມືດມົນອັນເລິກລັບ ຂ້າພຣະອົງກໍຈະບໍ່ຢ້ານ ເພາະວ່າພຣະອົງຊົງຢູ່ກັບຂ້າພຣະອົງ ໄມ້ຄ້ອນແລະໄມ້ເທົ້າທີ່ພຣະອົງຊົງໃຊ້ກໍຊ່ອຍໃຫ້ຂ້າພຣະອົງພົ້ນພັຍ. 5. ພຣະອົງຊົງລ້ຽງດູຂ້າພຣະອົງຢ່າງອີ່ມໜຳສຳຣານຖ້າມກາງສັດຕຣູທັງຫຼາຍ ພຣະອົງຊົງຕ້ອນຮັບຂ້າພຣະອົງໂດຍຖອກນໍ້າມັນຫອມໃສ່ເທິງຫົວຂ້າພຣະອົງ ແລະຊົງໃຫ້ຈອກຂ້າພຣະອົງເຕັມລົ້ນຢູ່.*

ໃນຂໍ້ 1-3, ຜູ້ລ້ຽງທີ່ດີເປັນພາບຂອງຜູ້ນຳພາຜູ້ທີ່ຊອກຫາສະຖານທີ່ເພື່ອນຳຝູງສັດລ້ຽງຂອງຕົນໃຫ້ມີອາຫານ, ນໍ້າ, ແລະບ່ອນພັກຜ່ອນ. ບັດນີ້ຈະເຫັນພາບຂອງຜູ້ລ້ຽງທີ່ຢູ່ຄຽງຂ້າງຝູງແກະນຳທາງຝູງສັດແບບສ່ວນຕົວ ເມື່ອລູກແກະປະເຊີນການທົດລອງຂອງຄວາມມືດແຫ່ງຮ່ອມພູ, ເພິ່ນກໍຢູ່ຄຽງຂ້າງພວກເຂົາໃນທີ່ນັ້ນ.

ໄມ້ຄ້ອນແລະໄມ້ເທົ້າເປັນເຄື່ອງມືທີ່ຜູ້ລ້ຽງແກະໄດ້ໃຊ້ເພື່ອປົກປ້ອງແລະນຳພາຝູງແກະຂອງເພິ່ນ. ໄມ້ຄ້ອນກໍເປັນໄມ້ສັ້ນ, ຄືກັນກັບທ່ອນກາດພວງມະໄລຣົດຊຶ່ງເໜັບໃສ່ແອວແລະໃຊ້ຕໍ່ສູ້ສັດຕ່າງໆແລະພວກໂຈນ. ໄມ້ເທົ້າກໍໃຊ້ຊ່ອຍໃນການຍ່າງ, ແຕ່ວ່າເມື່ອຍາມຈຳເປັນ, ຜູ້ລ້ຽງແກະກໍໃຊ້ປ້ອງແກະໂຕທີ່ມັນຈະຫຼົງຈາກທາງ.

ເມື່ອພວກເຮົາຮູ້ສຶກວ່າມີຄວາມກົດດັນຂອງໄມ້ເທົ້າ, ພວກເຮົາອາດຈະຖືກທົດລອງໃຫ້ເຖິງຄວາມໂກດຮ້າຍ. ແຕ່ວ່າພວກເຮົາສາມາດໄວ້ວາງໃຈພຣະຜູ້ລ້ຽງຂອງພວກເຮົາທີ່ໄດ້ຊົງເປັນຫ່ວງຕໍ່ການເບິ່ງແຍງແລະການປ້ອງກັນພັຍຂອງພວກເຮົາ. ການຕີສອນຂອງພຣະເຈົ້າແມ່ນຂຶ້ນຢູ່ກັບຄວາມຮັກທີ່ບໍ່ປ່ຽນແປງຂອງພຣະອົງສເມີ. ພຣະອົງນຳພາພວກເຮົາກັບມາສູ່ທາງອັນຖືກຕ້ອງ ເພື່ອວ່າພວກເຮົາຈະຮູ້ວ່າການສະຖິດຢູ່ດ້ວຍຂອງພຣະອົງ ແລະປະສົບການກັບຄວາມປ້ອງກັນພັຍຂອງພຣະອົງ, ເຖິງແມ່ນວ່າຢູ່ໃນ "ຮ່ອມພູທີ່ມືດດຳທີ່ສຸດ" (ຂໍ້ 4).

ໃນຂໍ້ທີ 5, ພາບພົດຂອງແກະແລະຜູ້ລ້ຽງແກະແມ່ນສັບປ່ຽນກັນໄດ້ສຳລັບຮູບພາບທີ່ສ່ວນຕົວວ່າ. ດຽວນີ້ດາວິດໄດ້ວາດພາບຕົວເອງເປັນເໝືອນແຂກໃນເຮືອນຂອງພຣະຜູ້ເປັນເຈົ້າ.

ພຣະເຢຊູຜູ້ລ້ຽງທີ່ດີໄດ້ເອີນຕົວທີ່ໂຕະກັບພວກອັຄສາວົກ. ຈິງແທ້, ການຮ່ວມຊຸມນຸມຄັ້ງສຸດທ້າຍຂອງພຣະອົງກັບພວກເຂົາເຈົ້າກ່ອນການຖືກຄຶງທີ່ໄມ້ກາງແຂນຂອງພຣະອົງ ແມ່ນຕອນທີ່ພຣະອົງໄດ້ຮ່ວມພິທີກິນປັສຄາກັບພວກເຂົາເຈົ້າ. ພຣະເຢຊູໄດ້ສັນຍາກັບພວກສາວົກຂອງພຣະອົງວ່າ ຈະມີວັນນຶ່ງທີ່ພຣະອົງຈະໄດ້ກິນແລະດື່ມຮ່ວມກັບພວກເຂົາເຈົ້າໃນຣາຊອານາຈັກຂອງພຣະອົງ.

ເມື່ອພວກເຮົາກຳລັງຍ່າງຜ່ານຮ່ອມພູທີ່ມືດແຫ່ງຄວາມສົງສັຍ, ຄວາມທໍ້ຖອຍໃຈ, ແລະຄາວຍາກລຳບາກ, ມັນດີສໍ່າໃດໜໍທີ່ຮູ້ຈັກວ່າພຣະເຈົ້າຢູ່ນຳແລະຈະຢູ່ກັບພວກເຮົາ!

| ຮູບພາບອັນໃດໃນພຣະທັມພາກນີ້ທີ່ມີຄວາມໝາຍຫຼາຍທີ່ສຸດສຳລັບທ່ານໃນເວລານີ້? |
|---|

## 3. <u>ເພງສັຣະເສີນ 23:6</u>

*6 ຄວາມດີແລະຄວາມຮັກອັນສັດຊື່ຂອງພຣະອົງຈະຢູ່ກັບຂ້າພຣະອົງຕລອດຊົ່ວຊີວິດ ແລະພຣະວິຫານຂອງພຣະອົງກໍຈະເປັນເຮືອນຢູ່ຂອງຂ້າພຣະອົງຕລອດໄປ*

ຄຳສັນຍາຕ່າງໆຂອງເພງສັຣເສີນນີ້ສືບຕໍ່ເປັນກອງຕໍ່ໆກັນໄປ. ພວກເຮົາບໍ່ໄດ້ຮັບຄຳສັນຍາງ່າຍໆໃຫ້ສລອງຄາບເຂົ້າເພາະຈັກໜ່ອຍກໍຈະໝົດໄປ. ພວກເຮົາບໍ່ໄດ້ເປັນພຽງແຕ່ແຂກ; ພວກເຮົາເປັນຜູ້ຢູ່ທີ່ນັ້ນ. ພວກເຮົາຈະຢູ່ກັບພຣະເຈົ້າຕາບໃດທີ່ພວກເຮົາມີຊີວິດຢູ່ ຄືຕລອດໄປເປັນນິດ!

"ຄວາມດີແລະຄວາມຮັກອັນສັດຊື່ຂອງພຣະອົງຈະຢູ່ກັບຂ້າພຣະອົງຕລອດຊົ່ວຊີວິດ" ຄວາມຮັກອັນສັດຊື່ເລັງເຖິງຄຳໝັ້ນສັນຍາຂອງພຣະເຈົ້າຄວາມຮັກທີ່ໄດ້ສັນຍາຕໍ່ໄພ່ພົນຂອງພຣະອົງເອງ. ທົ່ວທັງພຣະຄັມພີ, ພວກເຮົາເຫັນວ່າໄພ່ພົນຂອງພຣະເຈົ້າກໍເພິ່ງພາອາສັຍຄວາມຈິງອັນເຂັ້ມແຂງທີ່ພຣະເຈົ້າມີຄວາມສັດຊື່; ພຣະອົງຊົງສຳແດງຄວາມດີແລະຄວາມຮັກອັນສັດຊື່ຕໍ່ໄພ່ພົນຂອງພຣະອົງ.

ດາວິດໄດ້ສລຸບວ່າເພິ່ນຈະອາສັຍໃນທີ່ສະຖິດຢູ່ຂອງພຣະເຈົ້າກັບຄວາມດີທີ່ບໍ່ມີການສິ້ນສຸດ ແລະຄວາມຮັກອັນສັດຊື່ "ຕລອດຊົ່ວຊີວິດ" ປໂຍກນີ້ແມ່ນຕາມຄໍາເວົ້າ "ຄວາມຍາວຂອງມື້" ຊຶ່ງບໍ່ເດັ່ນຊັດຕໍ່ການສະແດງອອກຂອງຕລອດໄປເປັນນິດ. ແຕ່ວ່າ, ຂະນະທີ່ຄໍາໝັ້ນສັນຍາຄວາມຮັກຂອງພຣະເຈົ້າບໍ່ມີມື້ຈົບ, ຕາມເຫດຜົນຂອງປໂຍກນີ້ໝາຍເຖິງການມີຊີວິດຢູ່ຕລອດໄປເປັນນິດກັບພຣະເຈົ້າ.

ພຣະເຢຊູໄດ້ໃຊ້ພາບພົດຂອງ "ຜູ້ລ້ຽງແກະທີ່ດີ" ໃນໂຢຮັນ 10 ເພື່ອບັນລະຍາຍເຖິງການຮັບໃຊ້ຂອງພຣະອົງເອງ. ພຣະອົງສົມທຽບຜູ້ລ້ຽງແກະທີ່ດີໃສ່ກັບຄົນແປກໜ້າ, ຂະໂມຍ, ໂຈນແລະຄົນຮັບຈ້າງ. ຂະໂມຍແລະໂຈນມີເປົ້າໝາຍເພື່ອລັກແລະຂ້າຝູງແກະເທົ່ານັ້ນ, ແລະຜູ້ຮັບຈ້າງກໍຈະໜີປະເມື່ອຝູງແກະຖືກນາບຂູ່. ໃນທາງປຽບທຽບ, ຜູ້ລ້ຽງທີ່ດີແມ່ນເຕັມໃຈທີ່ຈະສະລະຊີວິດຂອງຕົນເພື່ອແກະນັ້ນ.

ພຣະເຢຊູ, ພຣະເຈົ້າໃນເນື້ອກາຍ, ໄດ້ເປີດເຜີຍຢ່າງເຕັມສ່ວນຄວາມໝາຍຂອງພຣະເຈົ້າໃນຖານະເຢໂຮວາໂຣຮີ. ພຣະທັມພຣະນິມິດສເນີໃຫ້ເຫັນພາບສຸດທ້າຍຂອງພຣະເຢຊູ, ຜູ້ລ້ຽງທີ່ດີຂອງພວກເຮົາ: "ເພາະວ່າພຣະເມສານ້ອຍ ທີ່ປະທັບຢູ່ຖ້າມກາງພຣະຣາຊບັນລັງນັ້ນ ຈະຊົງເປັນຜູ້ດູແລເຂົາແລະຈະຊົງນໍາເຂົາໄປເຖິງນໍ້າພຸອັນປະກອບດ້ວຍຊີວິດ ແລະພຣະເຈົ້າຈະຊົງເຊັດນໍ້າຕາທຸກຢົດຈາກຕາຂອງເຂົາ" (ພນມ 7:17). ຜູ້ລ້ຽງທີ່ດີແມ່ນພຣະເມສານ້ອຍຂອງພຣະເຈົ້າຜູ້ທີ່ໄດ້ສະລະຊີວິດຂອງພຣະອົງເພື່ອຝູງແກະຂອງພຣະອົງແລະພຣະເມສາຂອງພຣະເຈົ້າອົງເປັນຜູ້ລ້ຽງທີ່ດີຕລອດໄປເປັນນິດ.

| |
|---|
| ການປະພຶດແລະນິສັຍຂອງພວກເຮົາສາມາດສະແດງອອກຢ່າງໃດວ່າພວກເຮົາຕິດຕາມພຣະເຈົ້າ ຊຶ່ງເປັນຜູ້ລ້ຽງຂອງພວກເຮົາ? |

## ນໍາໃຊ້ໃນຊີວິດ

ສາຍສັມພັນກັບຜູ້ລ້ຽງທີ່ດີຈະເຮັດໃຫ້ມີຄວາມແຕກຕ່າງຢ່າງໃດໃນຊີວິດຂອງທ່ານ? ຈົ່ງເລືອກເອົາການນໍາໃຊ້ໃນຊີວິດອັນນຶ່ງໃນຕໍ່ລົງໄປນີ້.

- **ພັກຜ່ອນແລະວາງໃຈເຊື່ອ** ເມື່ອພຣະເຈົ້າຫາກບໍ່ປະທານຕາມຄວາມຄິດຂອງຄວາມຕ້ອງການຂອງທ່ານ, ຈົ່ງວາງໃຈເຊື່ອໃນຄວາມດີຂອງພຣະອົງ. ໃຊ້ເວລາຂອບພຣະຄຸນພຣະອົງ ສໍາລັບການປົກປ້ອງຮັກສາຂອງພຣະອົງໃນອາທິດນີ້.

- **ຢູ່ໃກ້ຊິດ.** ຄວາມຜິດບາບຈະເຮັດໃຫ້ທ່ານອອກຈາກປະສົບການທັງປວງທີ່ຜູ້ລ້ຽງທີ່ດີປາຖນາຈະມອບແກ່ທ່ານ. ຈົ່ງຮັບຮູ້ແລະສາລະພາບຄວາມຜິດບາບເຫຼົ່ານັ້ນທີ່ເຮັດໃຫ້ທ່ານໄດ້ແຍກຈາກພຣະອົງ ຊຶ່ງປາຖນາທີ່ຈະນໍາພາທ່ານສູ່ແມ່ນໍ້າອັນງຽບສງົບ.

- **ຄ່ອຍຊ້າລົງ.** ຖ້າທ່ານຫາກໄດ້ຮີບຮ້ອນແລະຖືກລົບກວນ, ອາດຈະເປັນເພາະວ່າທ່ານບໍ່ໄດ້ໃຊ້ເວລາໃຫ້ຜູ້ລ້ຽງລ້ຽງດູທ່ານແລະຍົກສູງວິນຍານຈິດຂອງທ່ານຂຶ້ນໃໝ່. ຈົ່ງປັ່ງນແປງຕາຕະລາງຂອງທ່ານໃຫ້ມີຄວາມແນ່ນອນວ່າມີເວລາທີ່ມີປະສິດທິພາບໃນພຣະຄໍາຂອງພຣະເຈົ້າ.

ພວກເຮົາທຸກຄົນຕ້ອງການຄວາມຊ່ວຍເຫຼືອດ້ານທາທິດທາງບາງຄັ້ງບາງຄາວ, ເຖິງວ່າພວກເຮົາຢາກຈະຍອມຮັບຫຼືບໍ່ກໍຕາມ. ຈົ່ງຂອບພຣະຄຸນທີ່ພວກເຮົາມີຜູ້ນໍາພາທີ່ສັດຊື່ສໍາລັບຊີວິດໃນເຢໂຮວາໂຣຮີ, ພຣະຜູ້ລ້ຽງຂອງພວກເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA**